# ການອ່ອນຄ່າຂອງເງິນດົ່ງ ຈະກະທົບຕໍ່ຜົນສົ່ງອອກແຕ່ຈະບໍ່ກະທົບຕໍ່ສະຖຽນລະພາບຂອງເງິນກີບ



ການຫລຸດຄ່າເງິນດົ່ງຂອງທະນາຄານແຫ່ງລັດຫວຽດນາມໄດ້ສ້າງຄວາມກັງວົນໃຈໃຫ້ແກ່ບັນດານັກລົງທຶນ ແລະ ຜູ້ສົ່ງອອກເນື່ອງຈາກວ່າຫວຽດນາມ ເປັນຄູ່ຄ້າລາຍໃຫຍ່ອັນດັບສອງຂອງລາວ ເຊິ່ງອາດກະທົບຕໍ່ການສົ່ງອອກສິນຄ້າຂອງລາວ ໄປຕະຫລາດຫວຽດນາມ. ຢ່າງໃດກໍ່ຕາມຈະບໍ່ກະທົບຕໍ່ສະຖຽນລະພາບຂອງເງິນກີບ ແຕ່ຂະແໜງທະນາຄານອາດໄດ້ຮັບຜົນກະທົບໂດຍກົງຈາກການອ່ອນຄ່າຂອງຄ່າເງິນດົ່ງ.

ທ່ານ ພູເພັດ ຄຳພູນວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ກ່າວຕໍ່ກອງປະຊຸມເສດຖະກິດປະຈຳສົກປີ 2009-2010 ໃນທ້າຍເດືອນຜ່ານມາວ່າ: ການອ່ອນຄ່າຂອງເງິນດົ່ງອາດສົ່ງຜົນກະທົບຕໍ່ປະເທດເຮົາ ໃນບາງດ້ານ ເປັນຕົ້ນແມ່ນການສົ່ງອອກສິນຄ້າຂອງລາວໄປຫວຽດນາມອາດຫລຸດລົງ ແລະ ການນຳເຂົ້າຈາກຫວຽດນາມອາດເພີ່ມຂຶ້ນ. ຢ່າງໃດກໍ່ຕາມການອ່ອນຄ່າຂອງເງິນດົ່ງຈະບໍ່ກະທົບຕໍ່ສະຖຽນລະພາບຂອງເງິນກີບຍ້ອນ ສປປ ລາວ ຍັງມີຖານະເກີນດຸນການຄ້າກັບ ສສ ຫວຽດນາມໃນລະດັບສູງສົມຄວນໂດຍປີ 2008 ເກີນດຸນເຖິງ 155,6 ລ້ານໂດລາສະຫະລັດ ແລະ ຄາດວ່າປີ 2009 ຈະເກີນດຸນປະມານ 180 ລ້ານໂດລາສະຫະລັດ.

ແນວໃດກໍ່ດີຂະແໜງທະນາຄານອາດໄດ້ຮັບຜົນກະທົບໂດຍກົງຈາກການອ່ອນຄ່າຂອງເງິນດົ່ງເນື່ອງຈາກຊັບສິນທີ່ເປັນເງິນດົ່ງຈະຫລຸດລົງເມື່ອຄິດໄລ່ເປັນເງິນໂດລາສະຫະລັດ ແລະເງິນກີບ, ທ່ານ ຜູ້ວ່າການທະນາຄານກ່າວເນັ້ນ.

ອ້າງອີງຈາກໜັງສືພິມເສດຖະກິດ-ສັງຄົມ, ສະບັບວັນທີ 08/01/2010

ສປປ ລາວ ມີສາຍພົວພັນການຄ້າ ແລະ ການລົງທຶນກັບ ສສ ຫວຽດນາມ ນັບມື້ນັບເພີ່ມຂື້ນ, ອັດຕາການກັບຫວຽດນາມຢືນຢູ່ອັນດັບສອງ ສ່ວນການລົງທຶນຂອງຫວຽດນາມແມ່ນຢູ່ອັນດັບໜຶ່ງ, ສະເພາະຂະແໜງທະນາຄານເຫັນວ່າຊັບສິນເປັນເງິນດົງກວມເອົາ 10% ຂອງຊັບສິນທັງໝົດ ເຊິ່ງຕົ້ນຕໍແມ່ນທະນາຄານທຸລະກິດລາວ-ຫວຽດສາຂາຢູ່ຫວຽດນາມ ແລະທະນາຄານຊາຄອມແບງ.

ສໍາລັບອັດຕາແລກປ່ຽນໃນມື້ວານນີ້ຂອງທະນາຄານການຄ້າຕ່າງປະເທດລາວແມ່ນ 0,4089 ກີບຕໍ່ໜຶ່ງດົງ, ສ່ວນສາເຫດການຫລຸດຄ່າເງິນດົງແມ່ນມາຈາກປັດໃຈການສົ່ງອອກທີ່ຫລຸດລົງລວມເຖິງເງິນໂອນຈາກແຮງງານຫວຽດນາມຢູ່ຕ່າງປະເທດ, ການທ່ອງທ່ຽວທີ່ຫລຸດລົງ ແລະ ການລົງທຶນ; ນອກນັ້ນກະແສເງິນໄຫຼອອກຈາກການລົງທຶນໃນຫລັກຊັບປະມານ 5 ຕື້ໂດລາສະຫະລັດ ເຮັດໃຫ້ດັດສະນີໃນຕະຫລາດຮຸ້ນຫວຽດນາມຫລຸດລົງ ສົ່ງຜົນໃຫ້ຄັງສໍາຮອງເງິນຕາຕ່າງປະເດທດຫລຸດລົງ ທ່ານ ພູເພັດ ຄໍາພູນວົງ ກ່າວ.

ອ້າງອີງຈາກໜັງສືພິມເສດຖະກິດ-ສັງຄົມ, ສະບັບວັນທີ 08/01/2010